# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. ສະພາບການພົ້ນເດັ່ນພາຍໃນ ສປປ ລາວ, ພາກພື້ນ ແລະ ສາກົນ........................... **ໜ້າ 01 – 08**

II. ການເຄື່ອນໄຫວຂອງການນຳ ພັກ ປປ ລາວ.................................................**ໜ້າ 09**

III. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ................................................ **ໜ້າ 10-14**


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ **ມິຖຸນາ 2022**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Fax 021 414043, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ

## 1. ສະພາບການພົ້ນເດັ່ນຢູ່ ສປປ ລາວ

### 1) ສະຖານະການໂຄວິດ-19

ໃນເດືອນ ມິຖຸນາ 2022, ການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19 ຢູ່ ສປປ ລາວ ມີທ່າອ່ຽງຫຼຸດລົງຢ່າງຕໍ່ເນື່ອງ, ລັດຖະບານ ໄດ້ຜ່ອນຜັນມາດຕະການປ້ອງກັນພະຍາດດັ່ງກ່າວ ໂດຍສະເພາະແມ່ນການເປີດດ່ານສາກົນຕ່າງໆ. ປັດຈຸບັນ, ມີຜູ້ຕິດເຊື້ອສະສົມທັງໝົດ 210,233 ປິ່ນປົວຫາຍດີ 210,203 ຄົນ; ກຳລັງປິ່ນປົວ 30 ຄົນ; ເສຍຊີວິດສະສົມທັງໝົດ 757 ຄົນ; ປະຊາຊົນຜູ້ທີ່ໄດ້ສັກວັກແຊງຄົບ 2 ເຂັມ ມີ 5,134,186 (69.97%), ໄດ້ສັກເຂັມທີໜຶ່ງ 5,832,660 (79.49%).

### 2) ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ຢ້ຽມຢາມ ຣາຊະອານາຈັກໄທ ຢ່າງເປັນທາງການ

ໂດຍຕອບສະໜອງຕາມຄຳເຊີນຂອງ ທ່ານ ພົນເອກ ປຣະຢຸດ ຈັນໂອຊາ, ນາຍົກລັດຖະມົນຕີ ແຫ່ງ ຣາຊະອານາຈັກໄທ, ທ່ານ ພັນຄຳ ວິພາວັນ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ພ້ອມດ້ວຍພັນລະຍາ ແລະ ຄະນະ ໄດ້ເດີນທາງຢ້ຽມຢາມ ຣາຊະອານາຈັກໄທ ຢ່າງເປັນທາງການ ໃນວັນທີ 1-2 ມິຖຸນາ 2022 ເພື່ອຮັດແໜ້ນສາຍພົວພັນມິດຕະພາບ ແລະ ການຮ່ວມມື ຖານບ້ານໃກ້ເຮືອນຄຽງທີ່ດີ ທີ່ມີມາແຕ່ດົນນານ ລະຫວ່າງ ສອງປະເທດ. ໃນການພົບປະ, ສອງຝ່າຍເຫັນດີຍົກລະດັບການຮ່ວມມືລາວ-ໄທ ເປັນ "**ຄູ່ຮ່ວມຍຸດທະສາດ ເພື່ອການຈະເລີນເຕີບໂຕ ແລະ ພັດທະນາແບບຍືນຍົງ**"; ສະໜັບສະໜູນ ໃຫ້ມີການແລກປ່ຽນການຢ້ຽມຢາມເຊິ່ງກັນ ແລະ ກັນຂອງການນຳຂັ້ນສູງຂອງສອງປະເທດ, ຕະຫຼອດຮອດບັນດາກົນໄກການຮ່ວມມືຕ່າງໆ ຕັ້ງແຕ່ຂັ້ນສູນກາງ ເຖິງຂັ້ນທ້ອງຖິ່ນ ເພື່ອເພີ່ມທະວີຄວາມໃກ້ຊິດ ແລະ ຮັດແໜ້ນສາຍພົວພັນ ລະຫວ່າງສອງປະເທດ; ຕີລາຄາສູງ ຕໍ່ການພົວພັນຮ່ວມມື ໃນການຮັກສາຄວາມສະຫງົບຕາມບໍລິເວນຊາຍແດນ, ເລັ່ງດຳເນີນການສຳຫຼວດ ແລະ ປັກຫຼັກໝາຍຊາຍແດນທີ່ຍັງຄົງຄ້າງ ໃຫ້ສຳເລັດໂດຍໄວ. ສອງລັດຖະບານ ໄດ້ເນັ້ນໜັກຄວາມສຳຄັນການເຊື່ອມໂຍງເຊື່ອມຈອດ ລະຫວ່າງກັນ ໃນການພັດທະນາເສັ້ນທາງຄົມມະນາຄົມທັງທາງບົກ ແລະ ທາງອາກາດ; ໄດ້ຕີລາຄາສູງໝາກຜົນຂອງການຮ່ວມມືດ້ານເສດຖະກິດ ມີບາດກ້າວຂະຫຍາຍຕົວຕໍ່ເນື່ອງ, ຣາຊະອານາຈັກໄທ ເປັນຄູ່ການຄ້າອັນດັບຕົ້ນຂອງລາວ, ມີມູນຄ່າ 7,2 ຕື້ໂດລາສະຫະລັດ ໃນປີ 2021, ເພີ່ມຂຶ້ນ 14% ທຽບໃສ່ປີ 2020, ການລົງທຶນຂອງໄທຢູ່ລາວ ບັນລຸໄດ້ 4,7 ຕື້ ໂດລາສະຫະລັດ ໃນປີ 2021 ຜ່ານມາ; ສຶກສາຄວາມເປັນໄປໄດ້ ໃນການນຳໃຊ້ເງິນຕາ ຂອງສອງປະເທດ (ກີບ-ບາດ) ເພື່ອຊຳລະສະສາງລະຫວ່າງກັນ; ນອກນັ້ນ, ລັດຖະບານໄທ ໄດ້ເພີ່ມການນຳເຂົ້າ ໄຟຟ້າຈາກລາວ ບັນລຸເປັນ 10,500 ເມກາວັດ.

ການຢ້ຽມຢາມຄັ້ງນີ້, ສອງຝ່າຍ ໄດ້ມີພິທີມອບ-ຮັບ ໂຄງການກໍ່ສ້າງສູນພັດທະນາ ສັງຄົມມິດຕະພາບ ລາວ-ໄທ; ພິທີລົງນາມເອກະສານ 3 ສະບັບຄື: ແຜນປະຕິບັດງານ ວ່າດ້ວຍ ການເປັນຄູ່ຮ່ວມຍຸດທະສາດ ລາວ-ໄທ ເພື່ອການຈະເລີນເຕີບໂຕ ແລະ ການພັດທະນາ ແບບຍືນຍົງ ໄລຍະ 5 ປີ (2022-2026); ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການກໍ່ສ້າງສວນພຶກສາສາດ ລາວ-ໄທ; ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການພັດທະນາພະລັງງານໄຟຟ້າ ຢູ່ ສປປ ລາວ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ຣາຊະອານາຈັກໄທ.

## 2. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ພັກກອມມູນິດຫວຽດນາມ ໄດ້ສືບຕໍ່ກໍ່ສ້າງພັກຢ່າງຕັ້ງໜ້າ ແລະ ສືບຕໍ່ຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈກອງປະຊຸມໃຫຍ່ຄັ້ງທີ XIII ຂອງພັກ, ສືບຕໍ່ຮັບມືກັບການລະບາດຂອງພະຍາດໂຄວິດ-19, ປາບປາມການສໍ້ລາດບັງຫຼວງ ແລະ ປະກົດການຫຍໍ້ທໍ້ຕ່າງໆ. ໃນວັນທີ 17/6/2022 ໄດ້ດຳເນີນກອງປະຊຸມກົມການເມືອງສູນກາງພັກ ໂດຍການເປັນປະທານຂອງ ສະຫາຍ ຫງວຽນຟູຈ້ອງ, ເລຂາທິການໃຫຍ່ພັກກອມມູນິດຫວຽດນາມ. ກອງປະຊຸມ ໄດ້ລົງ

ເລີກ ແລະ ຜັນຂະຫຍາຍມະຕິ ສະບັບເລກທີ 12- NQ/TW ຂອງກົມການເມືອງ ວ່າດ້ວຍ ການຊຸກຍູ້ການກໍ່ສ້າງກຳລັງ ຕຳຫຼວດປະຊາຊົນໃຫ້ມີຄວາມປອດໃສ, ເຂັ້ມແຂງ, ທັນສະໄໝ, ຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການ ແລະ ພາລະໜ້າທີ່ໃນສະພາບການໃໝ່, ແນໃສ່ຍົກສູງຄວາມຮັບຮູ້, ຄວາມຮັບຜິດຊອບ, ການກຳນົດທິດທາງດ້ານການເມືອງ ຂອງບັນດາອົງການ, ພະນັກງານສະມາຊິກພັກ ແລະ ກອງທັບ ໃນການຈັດຕັ້ງປະຕິບັດມະຕິດັ່ງກ່າວໃຫ້ມີປະສິດທິຜົນ.

**2). ພັກກອມມູນິດຈີນ**

ພາຍໃຕ້ການຊີ້ນຳຂອງພັກກອມມູນິດຈີນ, ສປ ຈີນ ສາມາດຄວບຄຸມການລະບາດຂອງພະຍາດໂຄວິດ-19 ໃນຂອບເຂດທົ່ວປະເທດ, ກະກຽມເປີດປະເທດ ເພື່ອພັດທະນາເສດຖະກິດ-ສັງຄົມຢ່າງເປັນປົກກະຕິ. ສູນກາງພັກ ໄດ້ແຕ່ງຕັ້ງ ສະຫາຍ ລິວຈຽນຊາວ, ຄະນະກຳມາທິການກວດກາວິໄນສູນກາງພັກ ເປັນ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນຄົນໃໝ່ ປ່ຽນແທນ ສະຫາຍ ຊົ້ງ ທາວ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນຜູ້ເກົ່າ. ນອກຈາກນີ້, ສະພາປະຊາຊົນຈີນ ຍັງໄດ້ໄຂກອງປະຊຸມ ຄັ້ງທີ 35 ຂອງຄະນະປະຈຳສະພາປະຊາຊົນແຫ່ງຊາດຈີນ ຊຸດທີ 13 ພາຍໃຕ້ການເປັນປະທານຂອງ ສະຫາຍ ລີຈ້ານຊູ, ກຳມະການປະຈຳການກົມການເມືອງສູນກາງພັກກອມມູນິດຈີນ, ປະທານຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ, ທີ່ປະຊຸມ ໄດ້ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານຮ່າງກົດໝາຍ ວ່າດ້ວຍ ກິລາ ສະບັບປັບປຸງ; ບົດລາຍງານກົດໝາຍ ວ່າດ້ວຍ ການປົກປັກຮັກສາທີ່ດິນ; ປັບປຸງຮ່າງກົດໝາຍ ວ່າດ້ວຍ ການຕ້ານການຜູກຂາດ; ຮ່າງມະຕິຂອງຄະນະປະຈຳສະພາປະຊາຊົນແຫ່ງຊາດ ແລະ ຮັບຮອງເອົາບົດລາຍງານ ກ່ຽວກັບບັນຊີສຸດທ້າຍ ປີ 2021.

ວັນທີ 20/6/202, ສປ ຈີນ ໄດ້ປະກາດແຕ່ງຕັ້ງຄະນະບໍລິຫານຊຸດໃໝ່ຂອງເຂດປົກຄອງພິເສດຮົງກົງ ທັງໝົດ 26 ທ່ານ ພາຍໃຕ້ການນຳຂອງ ທ່ານ John Lee, ຫົວໜ້າຄະນະບໍລິຫານຜູ້ໃໝ່ ເຊິ່ງຈະເລີ່ມປະຕິບັດໜ້າທີ່ນັບແຕ່ວັນທີ 1/7/2022 ເປັນຕົ້ນໄປ, ຊຶ່ງເປັນວັນຄົບຮອບ 25 ປີ ທີ່ຮົງກົງກັບຄືນສູ່ແຜ່ນດິນໃຫຍ່. ວັນທີ 30/06/2022, ທ່ານ ສີຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດແຫ່ງ ສປ ຈີນ ໄດ້ເດີນທາງຢ້ຽມຢາມຮົງກົງເພື່ອສະເຫຼີມສະຫຼອງວັນຄົບຮອບດັ່ງກ່າວ ແລະ ເພື່ອເປັນການຮັບຮອງຄະນະບໍລິຫານງານຊຸດໃໝ່ຂອງຮົງກົງຢ່າງເປັນທາງການ. ປະທານປະເທດ ສີຈິ້ນຜິງ ໄດ້ມີຄຳເຫັນຮຽກຮ້ອງໃຫ້ ຮົງກົງ ຈົ່ງເຊີດຊູຄວາມເປັນຊາດ, ສາມັກຄີ ເພື່ອຄວາມສະຫງົບ ແລະ ຄວາມຈະເລີນຮຸ່ງເຮືອງຂອງປະຊາຊົນຮົງກົງ ກໍຄືປະຊາຊົນຈີນ.

ວັນທີ 15/6/2022, ສະຫາຍ ສີຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດແຫ່ງ ສປ ຈີນ ໄດ້ສົນທະນາທາງໄກກັບ ທ່ານ ວາລາດີເມຍ ປູຕິນ, ປະທານາທິບໍດີລັດເຊຍ. ຜູ້ນຳທັງສອງ ໄດ້ຕີລາຄາສູງສາຍພົວພັນລະຫວ່າງສອງປະເທດ ນັບມື້ນັບຂະຫຍາຍຕົວດີໃນທຸກດ້ານ; ແລກປ່ຽນບັນຫາໃນພາກພື້ນ-ສາກົນ, ຊຶ່ງ ສະຫາຍ ສີຈິ້ນຜິງ ໄດ້ກ່າວວ່າ ສອງຊາດໄດ້ຮ່ວມມືພັດທະນາຢ່າງຕໍ່ເນື່ອງ ພາຍໃຕ້ສະພາບສາກົນທີ່ຜັນແປຕະຫຼອດເວລາ; ການຮ່ວມມືທາງດ້ານການຄ້າ ແລະ ເສດຖະກິດຂອງສອງປະເທດນັບມື້ນັບເພີ່ມທະວີຂຶ້ນ, ສປ ຈີນ ຈະຮ່ວມມືກັບລັດເຊຍ ຊຸກຍູ້ການພັດທະນາໃນໄລຍະຍາວ ເພື່ອຜົນປະໂຫຍດຂອງສອງຊາດ, ສືບຕໍ່ປະສານສົມທົບກັນຜ່ານອົງກອນລະຫວ່າງປະເທດ, ຜ່ານກົນໄກກຸ່ມ BRICS, ຂອບການຮ່ວມມືຊຽງໄຮ້ ແລະ ສປຊ. ສ່ວນ ທ່ານ ປູຕິນ ໄດ້ກ່າວວ່າ ສປ ຈີນ ເປັນເພື່ອນມິດທີ່ດີ, ສອງປະເທດ ລັດເຊຍ ແລະ ສປ ຈີນ ມີການຮ່ວມມືໃນທຸກລະດັບ ແລະ ທຸກຂະແໜງການນັບມື້ນັບຫຍັບເຂົ້າຫາກັນ ແລະ ສອງປະເທດໄດ້ຮ່ວມມືສະໜັບສະໜູນກັນ ໃນຂອບສອງຝ່າຍ ແລະ ໃນເວທີສາກົນຕະຫຼອດໄລຍະຜ່ານມາ ແລະ ຈະສືບຕໍ່ຮັກສາມູນເຊື້ອໃນຕໍ່ໜ້າ. ຜູ້ນຳ ທັງສອງຍັງໄດ້ປຶກສາຫາລື ກ່ຽວກັບບັນຫາໃນຢູແກຣນ ແລະ ໄດ້ເປັນເອກະພາບກັນຮຽກຮ້ອງໃຫ້ທຸກຝ່າຍເອົາໃຈໃສ່ຊຸກຍູ້ແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນໃຫ້ໄດ້ໂດຍໄວ, ຢຸດຕິການສະໜັບສະໜູນອາວຸດສົງຄາມແກ່ຢູແກຣນ; ບໍ່ເຫັນດີຕໍ່ການໃຊ້ມາດຕະການ ຂວ້ຳບາດຈາກຫຼາຍຝ່າຍຕໍ່ຝ່າຍດຽວ ແລະ ອື່ນໆ.

ສປ ຈີນ ເປັນເຈົ້າພາບຈັດກອງປະຊຸມສຸດຍອດຂອງກຸ່ມ BRICS ຄັ້ງທີ 14 (The 14th BRICS Summit) ແຕ່ວັນທີ 23-24/6/2022 ຜ່ານລະບົບທາງໄກ, ມີຜູ້ນຳຂອງກຸ່ມປະເທດສະມາຊິກ BRICS (ບຣາຊິນ, ລັດເຊຍ, ອິນເດຍ, ສປ ຈີນ, ອາຟຣິກກາໃຕ້) ແລະ ລັດຖະມົນຕີເສດຖະກິດຈາກຫຼາຍປະເທດຄື: The United Arab Emirates,

Saudi Arabia, Egypt, Kazakhstan, Indonesia, Argentina, Nigeria, Senegal ແລະ Thailand ເຂົ້າຮ່ວມ. ກອງປະຊຸມໄດ້ຕີລາຄາການຈັດຕັ້ງປະຕິບັດບັນດາແຜນການຮ່ວມມືຂອງກອງປະຊຸມ BRICS ຄັ້ງທີ 13 ຜ່ານມາ ແລະ ປຶກສາຫາລືການຮ່ວມມືໃນຕໍ່ໜ້າ ເປັນຕົ້ນແມ່ນເສີມຂະຫຍາຍທ່າແຮງຂອງ ກຸ່ມ BRICS ທີ່ມີພົນລະເມືອງ ເທົ່າກັບ 42% ຂອງພົນລະເມືອງທົ່ວໂລກ, ເສດຖະກິດເທົ່າກັບ ¼ (ໜຶ່ງສ່ວນສີ່) ຂອງເສດຖະກິດໂລກ. ບັນດາປະເທດສະມາຊິກກຸ່ມ BRICS ໄດ້ຮ່ວມມືພັດທະນາໃນທຸກຂະແໜງການ, ອັນພົ້ນເດັ່ນແມ່ນການຮ່ວມມືປ້ອງກັນ ແລະ ຕ້ານການແຜ່ລະບາດຂອງພະຍາດ COVID-19, ຊຶ່ງການຮ່ວມມືໂດຍລວມແມ່ນຂະຫຍາຍຕົວໄປໃນທາງເລິກ ແລະ ທາງກ້ວາງ. ໃນປີ 2021, ລວມຍອດການຄ້າລະຫວ່າງປະເທດກຸ່ມ BRICS ບັນລຸເຖິງ 8.550 ຕື້ໂດລາ, ເພີ່ມຂຶ້ນ 33,4% ທຽບໃສ່ປີຜ່ານມາ; ທະນາຄານພັດທະນາຂອງ BRICS (New Development Bank - NDB) ສາມາດຕອບສະໜອງເງິນກູ້ຢືມໄດ້ເຖິງ 30 ກ່ວາຕື້ໂດລາສະຫະລັດ. ໃນກອງປະຊຸມຄັ້ງນີ້, ທ່ານ ສີຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດແຫ່ງ ສປ ຈີນ, ປະທານກອງປະຊຸມໄດ້ມີຄຳເຫັນຮຽກຮ້ອງໃຫ້ປະເທດສະມາຊິກ ຈົ່ງສືບຕໍ່ເພີ່ມທະວີການຮ່ວມມື ແລະ ເສີມຂະຫຍາຍການຮ່ວມມືຫຼາຍຝ່າຍເພື່ອພັດທະນາປະເທດຊາດ, ເຄົາລົບອະທິປະໄຕຂອງກັນ ແລະ ກັນ ບົນພື້ນຖານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ; ຮ່ວມມືສະໜັບສະໜູນໃນເວທີສາກົນ ແລະ ກົດບັດຂອງອົງການສະຫະປະຊາຊາດ, ແກ້ໄຂຂໍ້ຂັດແຍ່ງຕ່າງໆເພື່ອຄວາມສະຫງົບໃນພາກພື້ນ-ສາກົນ ແລະ ມີສັນຕິພາບໃນທົ່ວໂລກ.

**3). ພັກແຮງງານເກົາຫຼີ**

ວັນທີ 10/6/2022, ຄະນະບໍລິຫານງານສູນກາງພັກແຮງງານເກົາຫຼີ ໄດ້ເປີດກອງປະຊຸມຄົບຄະນະຂອງຕົນ ຄັ້ງທີ 5 ສະໄໝທີ 8, ໂດຍການເປັນປະທານຂອງ ສະຫາຍ ກິມ ເຈີງ ອຸນ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ, ເຊິ່ງໄດ້ສະຫຼຸບຕີລາຄາຄືນການຈັດຕັ້ງປະຕິບັດນະໂຍບາຍທີ່ສຳຄັນຂອງພັກ-ລັດ, ຮັບຟັງການລາຍງານຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດຂອງລັດຖະບານ ໄລຍະ 6 ເດືອນຕົ້ນປີ 2022 ແລະ ທົບທວນຄືນການຈັດຕັ້ງປະຕິບັດບັນດາມະຕິກອງປະຊຸມຄົບຄະນະ ຄັ້ງທີ 4 ສະໄໝທີ 8 ຂອງພັກແຮງງານເກົາຫຼີ ແລະ ແຜນການໃນຕໍ່ໜ້າ, ວຽກງານປ້ອງກັນ ແລະ ສະກັດກັ້ນການແຜ່ລະບາດຂອງໂຄວິດ-19. ກອງປະຊຸມ ໄດ້ຕົກລົງປັບປຸງ-ແຕ່ງຕັ້ງການນຳຂັ້ນສູງສາຍພັກ ແລະ ສາຍລັດຈຳນວນໜຶ່ງ ເຊັ່ນ: ແຕ່ງຕັ້ງ ທ່ານ ນ. Choe Son Hui, ອະດີດນັກການທູດ, ຜູ້ມີປະສົບການສູງໃນການເຈລະຈາກ່ຽວກັບບັນຫານິວເຄລຍ ເປັນລັດຖະມົນຕີກະຊວງການຕ່າງປະເທດ.

ວັນທີ 1/6/2022, ກອງປະຊຸມຄະນະປະຈຳສະພາປະຊາຊົນສູງສຸດ ແຫ່ງ ສປປ ເກົາຫຼີ ຄັ້ງທີ 20 ສະໄໝທີ 14 ຈັດຂຶ້ນຢູ່ ຫໍສະພາມັນຊຸເດ, ນະຄອນຫຼວງພຽງຢາງ ໂດຍການເປັນປະທານຂອງ ສະຫາຍ ແຈ ຮອງ ແຮ, ປະທານຄະນະກຳມະການປະຈຳສະພາປະຊາຊົນສູງສຸດ. ກອງປະຊຸມໄດ້ປຶກສາຫາລື ແລະ ຮັບຮອງເອົາກົດໝາຍ ວ່າດ້ວຍ ການແຈ້ງບ່ອນຜະລິດສິນຄ້າ, ກົດໝາຍດ້ານພູມສາດ, ກົດໝາຍການຄຸ້ມຄອງການແພດ ແລະ ປັບປຸງກົດໝາຍວ່າດ້ວຍການປ້ອງກັນໂລກລະບາດ, ປັບປຸງກົດໝາຍການຄົມມະນາຄົມທາງບົກ.

**4). ພັກກອມມູນິດກູບາ**

ວັນທີ 5/6/2022, ສະຫາຍ Miguel Díaz, ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດແຫ່ງ ສ.ກູບາ ໄດ້ລົງຕິດຕາມການປະຕິບັດໜ້າທີ່ຂອງໜ່ວຍງານປ້ອງກັນໄພພິບັດແຫ່ງຊາດກູບາ ເນື່ອງຈາກພະຍຸເຂດຮ້ອນ Agatha ໄດ້ພັດເຂົ້າກູບາ ເຮັດໃຫ້ມີຝົນຕົກໜັກໃນຫຼາຍແຂວງທົ່ວປະເທດ, ຊຶ່ງມີອາຄານ 750 ກວ່າແຫ່ງ ໃນ 10 ແຂວງໄດ້ຮັບຄວາມເສຍຫາຍ, ປະຊາຊົນສູນຫາຍ 27 ຄົນ, ຕ້ອງອົບພະຍົບປະຊາຊົນອອກຈາກບ້ານເຮືອນ 4.000 ຄົນ, ສະຫາຍ Miguel Díaz ໄດ້ຮຽກຮ້ອງໃຫ້ທຸກພາກສ່ວນໃຫ້ການຊ່ວຍເຫຼືອປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ, ເລັ່ງຟື້ນຟູການຜະລິດ ແລະ ສ້ອມແປງສະຖານີໄຟຟ້າທີ່ເສຍຫາຍໃຫ້ກັບມາໃຊ້ໄດ້ປົກກະຕິໂດຍໄວ.

ວັນທີ 11/6/2022, ຄະນະອະນຸກຳມະການດ້ານການຮ່ວມມື ກູບາ-ສະຫະພາບເອີຣົບ ໄດ້ຈັດກອງປະຊຸມ ຄັ້ງທີ 4 ຂຶ້ນ ໂດຍການເຂົ້າຮ່ວມຂອງ ທ່ານ ນ. Ana Teresita González Fraga, ຮອງລັດຖະມົນຕີກະຊວງການຄ້າ ແລະ ການລົງທຶນກູບາ ແລະ ບັນດາທູດຈາກສະຫະພາບເອີຣົບ ໂດຍໄດ້ປຶກສາຫາລືກ່ຽວກັບການຮ່ວມມືທາງການເມືອງ, ສົ່ງເສີມທາງດ້ານເສດຖະກິດ-ການຄ້າ ແລະ ການລົງທຶນ. ນອກນັ້ນ, ກູບາ ຍັງໄດ້ລາຍງານໃຫ້ກອງປະຊຸມຊາບຕໍ່ກັບແຜນການພັດທະນາເສດຖະກິດສັງຄົມຂອງກູບາ ຮອດປີ 2030.

**5). ການເລືອກຕັ້ງຂັ້ນທ້ອງຖິ່ນຂອງກຳປູເຈຍ**

ວັນທີ 5/6/2022, ລາດຊະອານາຈັກກຳປູເຈຍ ໄດ້ດຳເນີນການເລືອກຕັ້ງສະມາຊິກສະພາທ້ອງຖິ່ນ (Commune Councillors) ຈຳນວນ 11,622 ທີ່ນັ່ງ ໃນ 25 ແຂວງ, ຊຸດທີ V ທົ່ວປະເທດ, ມີໜ່ວຍປ່ອນບັດເລືອກຕັ້ງທັງໝົດ 23,602 ໜ່ວຍ, ປະຊາຊົນອອກມາໃຊ້ສິດ 7,382,449 ຄົນ ເທົ່າກັບ 80,19% ຈາກຜູ້ມີສິດປ່ອນບັດເລືອກຕັ້ງທັງ ໝົດ 9,250,681 ຄົນ. ຜົນການເລືອກຕັ້ງມີຄື: 1) ພັກປະຊາຊົນກຳປູເຈຍ (Cambodian People's Party), ເຊິ່ງເປັນພັກຂອງລັດຖະບານຊຸດປັດຈຸບັນ ໄດ້ໄຊຊະນະ ດ້ວຍຄະແນນສຽງສະໜັບສະໜູນ 5,3 ລ້ານກ່ວາສຽງ , ໄດ້ 9,339 ບ່ອນນັ່ງ (80,3%); 2) ພັກແສງທຽນ (Candlelight Party) ໄດ້ຄະແນນສະໜັບສະໜູນ 1,6 ລ້ານສຽງ, ໄດ້ 2,192 ບ່ອນນັ່ງ (18,8%); 3) ພັກຟຸນຊິນເປັກ (FUNCINPEC Party) ໄດ້ 19 ບ່ອນນັ່ງ; 4) ພັກຂະແມເຕົ້າໂຮມຊາດ (Khmer National United Party) ໄດ້ 13 ບ່ອນນັ່ງ; 5) ພັກປະຊາທິປະໄຕທ້ອງຖິ່ນ (Grassroots Democratic Party) ໄດ້ 6 ບ່ອນນັ່ງ; 6) ພັກຂະແມຮັກຊາດ (Cambodia National Love Party) ໄດ້ 5 ບ່ອນນັ່ງ; 7) ພັກຊາວໜຸ່ມກຳປູເຈຍ (Cambodia Youth Party) ໄດ້ 3 ບ່ອນນັ່ງ; 8) ພັກກຳປູເຈຍນິຍົມ (Kampucheaniyum) ແລະ ພັກສັງຄົມປະຊາທິປະໄຕ (Beehive Social Democratic Party) ໄດ້ພັກລະ 1 ບ່ອນນັ່ງ.

**6). ການເລືອກຕັ້ງລັດຖະສະພາຝຣັ່ງ**

ການເລືອກຕັ້ງລັດຖະສະພາຝຣັ່ງ ຮອບທີ 1 ແລະ ຮອບທີ 2 ທີ່ຈັດຂຶ້ນໃນວັນທີ 12 ແລະ ວັນທີ 19 ມິຖຸນາ 2022 ຕາມລຳດັບ, ຜົນການເລືອກຕັ້ງທັງສອງຄັ້ງ ລ້ວນແຕ່ແມ່ນ ກຸ່ມພັກ LREM ນຳໂດຍ ທ່ານ Macron, ປະທານາທິບໍດີຝຣັ່ງ ໄດ້ຮັບໄຊຊະນະ, ເຊິ່ງຮອບຫຼ້າສຸດ ໄດ້ 245 ບ່ອນນັ່ງ ຈາກທັງໝົດ 577 ບ່ອນນັ່ງ ເທົ່າກັບ 38.5% ຫຼຸດລົງ 102 ບ່ອນນັ່ງ ຖ້າທຽບໃສ່ການເລືອກຕັ້ງປີ 2017; ກຸ່ມພັກການເມືອງ NUPES ໄດ້ຮັບ 131 ບ່ອນນັ່ງ ເທົ່າກັບ 31.6%, ເພີ່ມຂຶ້ນ 73 ບ່ອນນັ່ງ ຈາກ 58 ບ່ອນນັ່ງ; ພັກແນວຮ່ວມແຫ່ງຊາດ RN, ພັກການເມືອງຂວາຈັດ ນຳໂດຍ ທ່ານ ນາງ Marine Le Pen, ໄດ້ຮັບ 89 ບ່ອນນັ່ງ ເທົ່າກັບ 17.3% ເພີ່ມຂຶ້ນ 82 ບ່ອນນັ່ງ ຈາກ 7 ບ່ອນນັ່ງ ແລະ ພັກ Les Républicains ໄດ້ 61 ບ່ອນນັ່ງ ເທົ່າກັບ 7.3% ຫຼຸດລົງ 120 ບ່ອນນັ່ງ.

**7). ການເລືອກຕັ້ງປະທານາທິບໍດີໂກໂລມບີ**

ພາຍຫຼັງການເລືອກຕັ້ງປະທານາທິບໍດີໂກໂລມບີຮອບທຳອິດ ວັນທີ 29/05/2022 ບໍ່ມີຜູ້ໄດ້ຮັບໄຊຊະນະ, ໂກລົມບີ ຈຶ່ງດຳເດີນການເລືອກຕັ້ງຮອບ 2 ຂຶ້ນໃນວັນທີ 19/6/2022. ຜົນການເລືອກຕັ້ງແມ່ນ ທ່ານ Gustavo Petro, ສະມາຊິກສະພາສູງພັກຝ່າຍຊ້າຍ ພັກປະຫວັດສາດແຫ່ງໂກໂລມບີ (Historic Pact for Colombia), ອະດີດເຈົ້າຄອງນະຄອນຫຼວງ Bogota ໄດ້ຮັບໄຊຊະນະດ້ວຍຄະແນນສຽງ 11,280,694 ສຽງ ເທົ່າກັບ 50,44%. ສ່ວນ ທ່ານ Rodolfo Hernandez, ນັກທຸລະກິດ, ຜູ້ສະໝັກອິດສະລະ ໄດ້ຮັບຄະແນນສຽງ 10,579,803 ສຽງ ເທົ່າກັບ 47,31%. ທ່ານ Gustavo Petro ຈະເຂົ້າພິທີສາບານຕົວເພື່ອຮັບຕຳແໜ່ງເປັນປະທານາທິບໍດີໂກໂລມບີ ຢ່າງເປັນທາງການ ໃນວັນທີ 7/8/2022 ນີ້. ພາຍຫຼັງການເລືອກຕັ້ງ, ທ່ານ Miguel Díaz, ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດແຫ່ງກູບາ ໄດ້ສະແດງຄວາມຊົມເຊີຍ ທ່ານ Gustavo Petro, ປະທານພັກປະຫວັດສາດແຫ່ງໂກໂລມບີ ທີ່ໄດ້ຮັບໄຊຊະນະໃນການເລືອກຕັ້ງດັ່ງກ່າວ, ຊຶ່ງເປັນໄຊຊະນະຄັ້ງປະຫວັດສາດຂອງຂະບວນການຝ່າຍຊ້າຍໃນໂກໂລມບີ, ສ.ກູບາ ພ້ອມທີ່ຈະພັດທະນາສາຍພົວພັນຂອງສອງຊາດ ເພື່ອນຳຄວາມກ້າວໜ້າ ແລະ ຮ່ວມກັນພັດທະນາຊີວິດການເປັນຢູ່ຂອງປະຊາຊົນໃຫ້ນັບມື້ນັບດີຂຶ້ນ.

3. ສະພາບການພາກພື້ນ ແລະ ສາກົນ

1) ສະພາບການລະບາດຂອງເຊື້ອພະຍາດ ໂຄວິດ - 19 ໃນທົ່ວໂລກ

ໃນໄລຍະເດືອນມິຖຸນາ, ຕົວເລກຜູ້ຕິດເຊື້ອໂຄວິດ-19 ໃນທົ່ວໂລກ ໄດ້ຫຼຸດລົງຢ່າງຕໍ່ເນື່ອງ, ຫຼາຍປະເທດ ໄດ້ປະກາດຜ່ອນຜັນບັນດາມາດຕະການ ໂດຍສະເພາະແມ່ນການເປີດປະເທດຄືນໃໝ່ ເພື່ອຟື້ນຟູການພັດທະນາເສດຖະກິດ ຕ້ອນຮັບນັກທ່ອງທ່ຽວ ແລະ ອື່ນໆ. ຮອດວັນທີ 22 ມິຖຸນາ 2022, ຜູ້ຕິດເຊື້ອໂຄວິດ-19 ໃນທົ່ວໂລກ ມີ 545,538,359 ຄົນ, ເສຍຊີວິດ 6,342,956 ຄົນ, ປິ່ນປົວຫາຍດີ 520,606,737 ຄົນ.

2) ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກກາ

ສະພາບໃນຂົງເຂດ ອາຊີ-ປາຊີຟິກ ໂດຍລວມມີຄວາມສະຫງົບ ແລະ ມີເຫດການສຳຄັນເຊັ່ນ:

- ລະຫວ່າງວັນທີ 10-12/6/2022, ສະຖາບັນຄົ້ນຄ້ວາຍຸດທະສາດສາກົນຂອງ ສິງກະໂປ (International Institute for Strategic Studies -IISS) ໄດ້ເປັນເຈົ້າພາບຈັດກອງປະຊຸມສຸດຍອດຄວາມໝັ້ນຄົງອາຊີ (Shangri-La Dialogue 2022) ຄັ້ງທີ 19, ມີຄະນະຜູ້ແທນຈາກ 42 ປະເທດ ໃນຂົງເຂດເອີຣົບ ແລະ ອາຊີເຂົ້າຮ່ວມ, ໄດ້ປຶກສາຫາລືກັນຫຼາຍບັນຫາເຊັ່ນ: ຄວາມໝັ້ນຄົງໃນຂົງເຂດອາຊີ-ປາຊີຟິກ, ສະພາບຄວາມເຄັ່ງຕຶງໃນອູແກຣນ, ສະພາບແຫຼມເກົາຫຼີ, ສະພາບມຽນມາ ແລະ ບັນຫາອື່ນໆ; ໄດ້ຮຽກຮ້ອງໃຫ້ບັນດາປະເທດ ທົ່ວໂລກເພີ່ມທະວີການຮ່ວມມືດ້ານເສດຖະກິດ, ຄວາມໝັ້ນຄົງ, ຮ່ວມມືປ້ອງກັນ-ຕ້ານການລະບາດຂອງພະຍາດ ແລະ ບັນຫາທ້າທາຍອື່ນໆເພື່ອຄວາມສະຫງົບ, ມີສະຖຽນລະພາບ ແລະ ມີສັນຕິ ພາບໃນພາກພື້ນ-ສາກົນ.

- ວັນທີ 22/6/2022, ກຳປູເຈຍ ໄດ້ເປັນເຈົ້າພາບຈັດກອງປະຊຸມລັດຖະມົນຕີປ້ອງກັນປະເທດອາຊຽນ (ADMM) ຄັ້ງທີ 16 ທີ່ ນະຄອນຫຼວງພະນົມເປັນ ໂດຍການເປັນປະທານຂອງທ່ານ Tea Banh, ຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີກະຊວງປ້ອງກັນປະເທດກຳປູເຈຍ. ກອງປະຊຸມ ໄດ້ແລກປ່ຽນຫຼາຍບັນຫາ ແລະ ຮັບຮອງເອົາເອກະສານຫຼາຍສະບັບເປັນຕົ້ນ ການເພີ່ມທະວີການຮ່ວມມືດ້ານການທະຫານ ລະຫວ່າງບັນດາສະມາຊິກອາຊຽນ, ການປ້ອງກັນອາຊະຍາກຳຂ້າມຊາດ,ປ້ອງກັນການກໍ່ການຮ້າຍ, ຮ່ວມມືປ້ອງກັນຕ້ານການແຜ່ລະບາດຂອງພະຍາດ, ບັນຫາໄພພິບັດ ແລະ ອື່ນໆ. ພ້ອມນີ້, ກອງປະຊຸມຍັງໄດ້ອອກຖະແຫຼງການຮ່ວມຂອງລັດຖະມົນຕີປ້ອງກັນປະເທດອາຊຽນ ກ່ຽວກັບການຮ່ວມມືດ້ານການປ້ອງກັນປະເທດ ເພື່ອເພີ່ມທະວີຄວາມສາມັກຄີ ແລະ ຄວາມໝັ້ນຄົງໃນພາກພື້ນ.

- ສີລັງກາ ຍັງສືບຕໍ່ປະເຊີນກັບວິກິດການທາງເສດຖະກິດທີ່ຮຸນແຮງ, ເຊິ່ງລັດຖະບານຊຸດໃໝ່ຂອງສີລັງກາ ໄດ້ພະຍາຍາມປຸກລະດົມໃຫ້ປະຊາຊົນມີຄວາມເຊື່ອໝັ້ນຕໍ່ການນຳພາຂອງຕົນ ໃນການປັບປຸງເສດຖະກິດ ໄປເທື່ອລະກ້າວ ໂດຍສຸມໃສ່ການຈັດຫານ້ຳມັນເຊື້ອໄຟ, ຢາປົວພະຍາດ, ອາຫານ, ປຸ໋ຍເຄມີ ເພື່ອສະໜອງໃຫ້ແກ່ການຜະລິດກະສິກຳຂອງປະຊາຊົນໃຫ້ທົ່ວເຖິງ; ຂະນະດຽວກັນ, ນາຍົກລັດຖະມົນຕີສີລັງກາ ໄດ້ຮຽກຮ້ອງໃຫ້ປະຊາຊົນ ທຳການຜະລິດກະສິກຳໃຫ້ຫຼາຍຂຶ້ນ, ນຳໃຊ້ນ້ຳມັນ ແລະ ອາຍແກັສຢ່າງປະຢັດ, ຖ້າບໍ່ມີຄວາມຈຳເປັນຮີບດ່ວນ ແມ່ນບໍ່ໃຫ້ມີການເດີນທາງ ເພື່ອປະຢັດການນຳໃຊ້ນ້ຳມັນ. ປັດຈຸບັນ, ສີລັງກາ ມີຄ່າໃຊ້ຈ່າຍນ້ຳມັນເຊື້ອໄຟ ປະມານ 500 ລ້ານໂດລາສະຫະລັດ ຕໍ່ເດືອນ ແລະ ຕ້ອງການຄັງສຳຮອງປະມານ 5 ຕື້ໂດລາສະຫະລັດ ເພື່ອນຳເຂົ້າເຄື່ອງບໍລິໂພກ ແລະ ອຸປະໂພກທີ່ຈຳເປັນ ອີກ 6 ເດືອນຂ້າງໜ້າ; ລັດຖະບານ ໄດ້ປະກາດເກັບພາສີ VAT ຈາກ 8% ເປັນ 12% ສາມາດສ້າງລາຍຮັບເພີ່ມ 181 ລ້ານໂດລາສະຫະລັດ ແລະ ຈະຂຶ້ນພາສີນິຕິບຸກຄົນ ໃນເດືອນຕຸລາ ຈາກ 24% ເປັນ 30%. ປັດຈຸບັນ ມີຫຼາຍອົງການຈັດຕັ້ງສາກົນ ທີ່ກຳລັງພິຈາລະນາໃຫ້ເງິນກູ້ຢືມ ເພື່ອຟື້ນຟູເສດຖະກິດ ບົນພື້ນຖານທີ່ລັດຖະບານສີລັງກາຕ້ອງໄດ້ສະເໜີແຜນການແກ້ໄຂວິກິດການພາຍໃນປະເທດຢ່າງລະອຽດ ແລະ ມີຈຸດສຸມ, ໂດຍເບື້ອງຕົ້ນ ອົງການສະຫະປະຊາຊາດ ກຳລັງພິຈາລະນາໃຫ້ການຊ່ວຍເຫຼືອດ້ານມະນຸດສະທຳແກ່ສີລັງກາ ປະມານ 48 ລ້ານໂດລາສະຫະລັດ, ທະນາຄານໂລກ ກຳລັງພິຈາລະນາເງິນຊ່ວຍເຫຼືອ ປະມານ 600 ລ້ານໂດລາສະຫະລັດ, ທະນາຄານເພື່ອການລົງທຶນໂຄງລ່າງພື້ນຖານອາຊີ (AIIB) ກຳລັງພິຈາລະນາຊ່ວຍເຫຼືອປະມານ 100 ລ້ານໂດລາສະຫະລັດ. ລັດເຊຍ ກໍໄດ້ປະກາດສະໜອງນ້ຳມັນເຊື້ອໄຟ 90 ລ້ານໂຕນ ເພື່ອຊ່ວຍວິກິດການດ້ານພະລັງງານໃນສີລັງກາ.

**3). ສະພາບການ ໃນຂົງເຂດເອີຣົບ-ອາເມຣິກາ**

ການປະຕິບັດການພິເສດທາງທະຫານຂອງລັດເຊຍ ໃນອູແກຣນ ຍັງສືບຕໍ່ ໂດຍລັດເຊຍ ສາມາດຍຶດເມືອງ Kherson ແລະ ເມືອງ Melitopol ທາງພາກໃຕ້ ຂອງ ອູແກຣນ ໄດ້ 100 %, ເມືອງ Severodonetsk ໄດ້ເປັນສ່ວນໃຫຍ່ ເພື່ອປົດປ່ອຍຄວາມເປັນເອກະລາດຂອງ Luhansk ແລະ Donetsk ທີ່ນອນໃນຂົງເຂດ Donbass. ຄຽງຄູ່ກັນນັ້ນ, ລັດເຊຍ ໄດ້ໃຫ້ການຊ່ວຍເຫຼືອດ້ານມະນຸດສະທຳແກ່ປະຊາຊົນອູແກຣນ ໂດຍການສົ່ງສະບຽງອາຫານ 642 ໂຕນ ໄປຍັງ Donetsk, Luhansk, ເຂດ Kherson Kharkov ແລະ zaporozhye, ຕັ້ງແຕ່ເດືອນ 3/2022 ເປັນຕົ້ນມາ ລັດເຊຍ ໄດ້ສົ່ງສະບຽງອາຫານຊ່ວຍເຫຼືອໃຫ້ປະຊາຊົນອູແກຣນ ລວມຈຳນວນ 27.334 ໂຕນ ແລະ ເປີດຊ່ອງທາງການຊ່ວຍເຫຼືອດ້ານມະນຸດສະທຳ 1,122 ຄັ້ງ. ນອກຈາກນັ້ນ, ລັດເຊຍ ຍັງໄດ້ປຶກສາຫາລືກັບຕວັກກີ ເພື່ອຊອກຫາຊ່ອງທາງການສົ່ງອອກທັນຍະພືດ ຂອງ ລັດເຊຍ ແລະ ອູແກຣນ ສູ່ຕະຫຼາດໂລກ ເພື່ອແກ້ໄຂວິກິດການຂາດແຄນອາຫານທີ່ຫຼາຍປະເທດພວມປະເຊີນຢູ່.

ອາເມລິກາ ແລະ ພັນທະມິດ ສືບຕໍ່ໃຫ້ການຊ່ວຍເຫຼືອ ອູແກຣນ ແລະ ຂວໍ້າບາດ ລັດເຊຍ. ໃນນັ້ນ, ທະນະຄານໂລກ ໄດ້ອະນຸມັດງົບປະມານຊ່ວຍເຫຼືອ ອູແກຣນ 1,49 ຕື້ໂດລາ ທີ່ລະດົມມາຈາກ ອັງກິດ, ໂຮນລັງ, ລິດຕັວນີ, ລັດເວຍ ແລະ ປະເທດອື່ນໆ. ອັງກິດ ໄດ້ສົ່ງລະບົບລູກສອນໄຟພິໄສໄກ ລຸ້ນ M270 ໃຫ້ອູແກຣນ; ການາດາ ຂວໍ້າບາດ 28 ຫົວໜ່ວຍ ການບໍລິການທີ່ສຳຄັນທີ່ກ່ຽວຂ້ອງກັບການສົ່ງອອກນໍ້າມັນ, ແກັສ, ອຸດສາຫະກຳທາງເຄມີ ແລະ ການບັນຊີ ຂອງລັດເຊຍ. ຍີ່ປຸ່ນ ຂວໍ້າບາດທະນະຄານລັດເຊຍ 2 ແຫ່ງ ແລະ ທະນະຄານເບລາຣຸດຊີ 1 ແຫ່ງ. ນອກນີ້, ບັນດາປະເທດສະມາຊິກ NATO ໄດ້ຮ່ວມກັນຊ້ອມຮົບປະຈຳປີ (BALTOPS 22) ເລີ່ມແຕ່ວັນ 5-17/6/2022 ທີ່ທະເລ Baltic, ມີ 16 ປະເທດເຂົ້າຮ່ວມ ຄື: ຕວັກກີ, ແບນຊິກ, ບູນກາລີ, ດານມາກ, ແອັດສະໂຕນີ, ຝຣັ່ງ, ເຢຍລະມັນ, ລັດເວຍ, ລິດຕົວນີ, ໂຮນລັງ, ນອກແວ, ໂປໂລຍ, ອັງກິດ, ສ.ອາເມລິກາ, ແຟງລັງ ແລະ ຊູແອດ. ນອກຈາກນັ້ນ, ໃນກອງປະຊຸມລັດຖະມົນຕີປ້ອງກັນປະເທດຂອງ ກຸ່ມປະເທດ NATO ທີ່ຈັດຂຶ້ນ ຢູ່ Brussels, ປະເທດ Belgium ໃນວັນທີ 15/6/2022 ຜ່ານມາ ກໍໄດ້ຕົກລົງຈະສືບຕໍ່ສະໜອງອາວຸດສົງຄາມ ແລະ ງົບປະມານໃຫ້ແກ່ ອູແກຣນ; ຄຽງຄູ່ກັນນັ້ນ, ຜູ້ນຳຂອງປະເທດສະມາຊິກເອີຣົບຈຳນວນໜຶ່ງເປັນຕົ້ນ ປະທານາທິບໍດີຝຣັ່ງ, ປະທານາທິບໍດີຣູມານີ, ນາຍົກລັດຖະມົນຕີເຢຍລະມັນ, ນາຍົກລັດຖະມົນຕີອີຕາລີ ແລະ ນາຍົກລັດຖະມົນຕີອັງກິດ ໄດ້ໄປຢ້ຽມຢາມເມືອງ Kyiv, ປະເທດອູແກຣນ ໃນວັນທີ 16/6/2022 ເພື່ອຢືນຢັນການສະໜັບສະໜູນອູແກຣນ ໃນການຕ້ານລັດເຊຍ. ນອກຈາກນັ້ນ, ໃນກອງປະຊຸມຄະນະກຳມາທິການເອີຣົບ ໃນວັນທີ 17/6/2022 ໄດ້ເປັນເອກະພາບໃຫ້ ອູແກຣນ ແລະ ມອນໂດວາ ມີສະຖານະເປັນຜູ້ສະໝັກເຂົ້າເປັນສະມາຊິກຂອງ ສະຫະພາບເອີຣົບ.

ບໍລິສັດ Gazprom ຂອງ ລັດເຊຍ ໄດ້ປະກາດມາດຕະການຈະຫຼຸດ ການສົ່ງແກັສໃຫ້ເຢຍລະມັນ ແລະ ອີຕາລີ ເຫຼືອແຕ່ 60% ແລະ ຕ້ອງຈ່າຍເປັນອັດຕາ ເງິນຣູບ (currency of ruble). ຂະນະທີ່ ການສົ່ງອອກນໍ້າມັນຂອງລັດເຊຍ ສືບຕໍ່ເພີ່ມຂຶ້ນ, ເຊິ່ງໃນເດືອນເມສາຜ່ານມາ, ການສົ່ງອອກນໍ້າມັນຂອງລັດເຊຍ ເພີ່ມຂຶ້ນ ຈາກ 8,1 ລ້ານຖັງ/ວັນ ເປັນ 8,72 ລ້ານຖັງ ຕໍ່ວັນ, ກຳໄລຈາກລາຄານໍ້າມັນໃນປັດຈຸບັນ 20 ຕື້ ໂດລາສະຫະລັດ/ເດືອນ, ເງິນຣຸບ ແຂງຄ່າຂຶ້ນ ຈາກ 150 ຣຸບ/ 1ໂດລາ ມາເປັນ 60-70 ຣຸບ/1ໂດລາ. ນອກຈາກນັ້ນ, ທ່ານ ປູຕິນ ຍັງໄດ້ແຈ້ງຄວາມປະສົງໃນການຂະຫຍາຍຕະຫຼາດສົ່ງອອກນໍ້າມັນຂອງຕົນ ມາທາງອາຊີ ຢ່າງເປັນທາງການ ຕໍ່ທີ່ປະຊຸມດ້ານເສດຖະກິດຂອງກຸ່ມ BRICS, ຕັ້ງແຕ່ເດືອນມີນາ-ພຶດສະພາ 2022 ລັດເຊຍ ໄດ້ສົ່ງນໍ້າມັນມາທະວີບອາຊີ ເພີ່ມຂຶ້ນ 347% ຖ້າທຽບໃສ່ປີ 2021, ຫຼາຍກວ່າໝູ່ແມ່ນສົ່ງໄປອິນເດຍ, ສປ ຈີນ.

- ໃນກອງປະຊຸມເວທີປາໄສເສດຖະກິດສາກົນ (St.Petersburg International Economic Forum) ຄັ້ງທີ

25 ທີ່ນະຄອນເຊນປີເຕີເບີກ ທີ່ຈັດຂຶ້ນໃນວັນທີ 19 ມິຖຸນາ 2022, ທ່ານ Vladimir Putin, ປະທານາທິບໍດີລັດເຊຍ ໄດ້ກ່າວວ່າ ການຂວ້ຳບາດເສດຖະກິດລັດເຊຍ ຂອງຕາເວັນຕົກ ຈະເຮັດໃຫ້ເສດຖະກິດຂອງສະມາຊິກ EU ເສຍຫາຍ ຫຼາຍກວ່າ 400 ຕື້ໂດລາ ແລະ ເຖິງຈຸດສິ້ນສຸດຍຸກຂົ້ວອຳນາດດຽວແລ້ວ (Unipolar). ໃນປັດຈຸບັນ, ອາເມລິກາ ກຳລັງປະເຊີນກັບພາວະເງິນໂດລາເຟີ້; ທ່ານປູຕິນ ກ່າວຢ້ຳວ່າ ລັດເຊຍ ເປັນປະເທດທີ່ເຂັ້ມແຂງ, ສາມາດຮັບມືກັບສິ່ງ ທ້າທາຍທຸກຮູບແບບ; ຄວາມເຄັ່ງຕຶງໃນອູແກຣນ ຍ້ອນອາເມລິກາ, ພັນທະມິດຕາເວັນຕົກ ແລະ ນາໂຕ ບໍ່ພິຈາລະນາ ຕໍ່ການສະເໜີກ່ຽວກັບຄວາມໝັ້ນຄົງຂອງລັດເຊຍ ເຊິ່ງພວກເຂົາ ອາໄສອູແກຣນ ກໍ່ຄວາມບໍ່ສະຫງົບ ລະເມີດອະທິປະ ໄຕບັນດາປະເທດເອີຣົບຕາເວັນອອກ. ສ່ວນ ທ່ານ ສີຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດແຫ່ງ ສປ ຈີນ ໄດ້ ສະແດງທັດສະນະວ່າ: ປັດຈຸບັນໂລກໄດ້ມີການປ່ຽນແປງຫຼາຍ, ພວກເຮົາຄວນສ້າງເງື່ອນໄຂອັນສະດວກໃຫ້ແກ່ການ ພັດທະນາ, ຊຸກຍູ້ຂະບວນການເສດຖະກິດໂລກາພິວັດແຫ່ງການເຊື່ອມໂຍງ, ຍຶດໝັ້ນນະວັດຕະກຳໃໝ່ ແລະ ຍົກໃຫ້ ເຫັນວ່າພື້ນຖານເສດຖະກິດຂອງ ສປ ຈີນ ມີຄວາມຍືດຢຸ່ນ ແລະ ໝັ້ນທ່ຽງ, ສປ ຈີນ ຈະສືບຕໍ່ຊຸກຍູ້ການພັດທະນາທີ່ ມີຄຸນນະພາບສູງ, ເປີດກວ້າງ, ຊຸກຍູ້ນະໂຍບາຍ "ໜຶ່ງແລວໜຶ່ງເສັ້ນທາງ", ຍິນດີຮ່ວມມືກັບປະເທດຕ່າງໆໃນທົ່ວໂລກ.

**4). ກອງປະຊຸມສຸດຍອດອາເມລິກາ ຄັ້ງທີ IX**

ສ.ອາເມລິກາ ເປັນເຈົ້າພາບຈັດກອງປະຊຸມສຸດຍອດອາເມລິກາ ຄັ້ງທີ IX, ທີ່ເມືອງ Los Angeles, ແຕ່ວັນ ທີ 6 - 10/6/2022. ມີຜູ້ນຳລະດັບປະມຸກລັດ, ນາຍົກລັດຖະມົນຕີ ແລະ ລັດຖະມົນຕີຕ່າງປະເທດຂອງບັນດາປະເທດ ໃນອາເມລິກາລາຕິນເຂົ້າຮ່ວມ 31 ທ່ານ. ຜູ້ນຳອາເມລິກາ ໄດ້ຈຳກັດບໍ່ເຊີນຜູ້ນຳຂອງ ກູບາ, ເວເນຊູເອລາ, ນິກາຣາ ກວາ ເຂົ້າຮ່ວມກອງປະຊຸມດັ່ງກ່າວ. ສ່ວນປະທານາທິບໍດີເມັກຊິໂກ ທ່ານ Andrés Manuel López Obrador ໄດ້ ປະຕິເສດບໍ່ເຂົ້າຮ່ວມ, ສົ່ງລັດຖະມົນຕີຕ່າງປະເທດເມັກຊິໂກເຂົ້າຮ່ວມແທນ. ກອງປະຊຸມຄັ້ງນີ້, ສ.ອາເມລິກາ ໄດ້ສະ ເໜີປຶກສາຫາລືໃນ 5 ບັນຫາ ຄື: 1). ການເຄື່ອນຍ້າຍຂອງຜູ້ອົບພະຍົບ; 2). ລັດປະຊາທິປະໄຕເປັນພື້ນຖານ; 3). ອິດທິພົນຂອງອາເມລິກາໃນພາກພື້ນບໍ່ແມ່ນບັນຫາທີ່ມັນເຄີຍເປັນ; 4). ກອບທີ່ແທ້ຈິງຂອງກອງປະຊຸມສຸດຍອດຄັ້ງນີ້ ເພື່ອຫຍັງ, ສ.ອາເມລິກາ ກ່າວວ່າເພື່ອປະຊາທິປະໄຕ ແລະ ນຳຜົນປະໂຫຍດແກ່ບັນດາປະເທດໃຫ້ການຮ່ວມມື; 5). ສ.ອາເມລິກາ ມີການປ່ຽນແປງຢ່າງໃຫຍ່ຫຼວງນັບແຕ່ກອງປະຊຸມສຸດຍອດຄັ້ງທຳອິດໃນປີ 1994 ເປັນຕົ້ນມາ. ໃນນີ້ໄດ້ ອ້າງບັນຫາປະຊາທິປະໄຕ, ຄວາມສະເໝີພາບດ້ານສິດທິມະນຸດ ແລະ ອື່ນໆ.

**5). ສະພາບການໃນອາເມລິກາ**

ອາເມລິກາ ພາຍໃຕ້ການນຳພາຂອງປະທານາທິບໍດີ ໂຈ ໄບເດັນ ຈາກພັກດີໂມແຄຣັດ ກຳລັງປະເຊີນກັບພາວະ ເງິນເຟີ້, ລາຄາສິນຄ້າ, ພະລັງງານ ເພີ່ມສູງຂຶ້ນທີ່ສຸດໃນຮອບ 40 ປີ ເຖິງ 8,6%, ປະເຊີນກັບບັນຫາຄວາມແຕກແຍກ ພາຍໃນ, ບັນຫາອາຊະຍາກຳ, ບັນຫາການຄວບຄຸມອາວຸດປືນ ແລະ ອື່ນໆ ເຮັດໃຫ້ຄະແນນນິຍົມຂອງ ທ່ານ ໂຈ ໄບ ເດັນ ຍັງເຫຼືອພຽງ 37% ຈາກຜົນສຳຫຼວດຫຼ້າສຸດ, ຈະສົ່ງຜົນຕໍ່ການເລືອກຕັ້ງສະພາຕ່ຳ ແລະ ສະພາສູງ ກາງສະໄໝ ທີ່ ຈະມີຂຶ້ນ ໃນວັນທີ 8 ພະຈິກ 2022 ນີ້, ເນື່ອງຈາກພັກ ຣີພັບບລີກັນ ໄດ້ຍົກບັນຫາພາຍໃນ ເພື່ອໂຈມຕີທ່ານ ໂຈ ໄບເດັນ. ຂະນະທີ່ ທ່ານ ໂຈ ໄບເດັນ ໄດ້ຕຳນິບັນດາບໍລິສັດນ້ຳມັນ ແລະ ພະລັງງານ ທີ່ສວຍໂອກາດຂຶ້ນລາຄານ້ຳມັນ ສູງເກີນໄປ, ທັງກ່າວໂທດການປະຕິບັດການພິເສດທາງທະຫານຂອງລັດເຊຍ ໃນອູແກຣນ ວ່າເປັນສາເຫດວິກິດການ ໃນອາເມລິກາ ກໍຄືວິກິດການທົ່ວໂລກ.

**6). ສະພາບການໃນຂົງເຂດຕາເວັນອອກກາງ**

ຂົງເຂດຕາເວັນອອກກາງ ຍັງຄົງມີຄວາມຂັດແຍ່ງ ແລະ ມີການປະທະກັນຂອງກຸ່ມຕ່າງໆ ເປັນຕົ້ນແມ່ນຄວາມ ຂັດແຍ່ງລະຫວ່າງ ອິດສະລາແອນ ແລະ ຊີຣີ, ເຊິ່ງ ໃນວັນທີ 10 ມິຖຸນາ 2022, ອິດສະລາແອນ ໄດ້ໂຈມຕີດ້ວຍລູກ ສອນໄຟ ໃສ່ ນະຄອນຫຼວງ Damascus ຂອງ ຊີຣີ. ທ່ານ Hossein Amir Abdollhian, ລັດຖະມົນຕີກະຊວງການ ຕ່າງປະເທດອີຣານ ໄດ້ກ່າວປະນາມເຫດການໂຈມຕີດັ່ງກ່າວ ວ່າເປັນການລ່ວງລ້ຳອຳນາດອະທິປະໄຕ ແລະ ຜືນ ແຜ່ນດິນອັນຄົບຖ້ວນຂອງຊາດອື່ນ, ເປັນການລະເມີດຕໍ່ກົດໝາຍສາກົນ ແລະ ລະເມີດຕໍ່ຫຼັກການມະນຸດສະທຳ, ພ້ອມທັງຢືນຢັນວ່າ ອີຣານ ຈະສືບຕໍ່ສະໜັບສະໜູນຊີຣີ.

ການເຈລະຈາ ກ່ຽວກັບການເຂົ້າຮ່ວມຄືນຂອງອາເມລິກາ ໃນສົນຍານິວເຄລຍອີຣານ (JCPOA) ເປັນສິ່ງສຳຄັນ ເພື່ອພ້ອມກັນຢຸດການນຳໃຊ້ນິວເຄລຍໃນວົງກວ້າງ, ເຊິ່ງ ອາເມລິກາ ແລະ ອີຣານ ໄດ້ເລີ່ມພິຈາລະນາຟື້ນຟູການຮ່ວມມືໃນໂຄງການດັ່ງກ່າວຄືນໃໝ່ ໃນເດືອນພະຈິກ 2021 ເປັນຕົ້ນມາ, ໃນນັ້ນ ອີຣານ ໄດ້ຮຽກຮ້ອງໃຫ້ອາເມລິກາ ຍົກເລີກມາດຕະການຂວ້ຳບາດທັງໝົດ ຕໍ່ອີຣານ, ຂະນະທີ່ ອາເມລິກາ ໄດ້ຮຽກຮ້ອງໃຫ້ອີຣານຍົກເລີກບັນດາຂັ້ນຕອນທີ່ກ່ຽວພັນກັບນິວເຄລຍ, ແຕ່ການເຈລະຈາຫຼາຍຄັ້ງຜ່ານມາ ບໍ່ໄດ້ຮັບຜົນສຳເລັດ. ການເຈລະຈາ ຄັ້ງຫຼ້າສຸດຂອງສອງຝ່າຍ ທີ່ເວທີສົນທະນາໄກ່ເກ່ຍຂອງສະຫະພາບເອີຣົບ ທີ່ນະຄອນຫຼວງໂດຮາ ຂອງກາຕາ ໃນວັນທີ 28 ມິຖຸນາ ຜ່ານມາ ກໍບໍ່ມີຄວາມຄືບໜ້າໃດໆ ໂດຍອາເມລິກາ ອ້າງວ່າ ອີຣານ ໄດ້ຍົກບັນຫາທີ່ບໍ່ກ່ຽວຂ້ອງກັບ JCPOA, ສະແດງຄວາມບໍ່ຈິງໃຈຂອງອີຣານ ໃນການຟື້ນຄືນຂໍ້ຕົກລົງດັ່ງກ່າວ. ຂະນະທີ່ ອີຣານ ໄດ້ຖະແຫຼງວ່າ ສິ່ງທີ່ເຮັດໃຫ້ການເຈລະຈາຄັ້ງນີ້ ບໍ່ສາມາດບັນລຸຜົນ ເນື່ອງຈາກ ອາເມລິກາ ຍັງຄົງຍຶດໝັ້ນໃນຮ່າງກົດ ໝາຍ ທີ່ສະເໜີໃນນະຄອນຫຼວງວຽນນາ, ໂອຕຣິດ ປີ 2021 ຜ່ານມາ, ຮ່າງດັ່ງກ່າວ ບໍ່ໄດ້ຮັບປະກັນໃດໆ ຕໍ່ຜົນປະໂຫຍດທາງເສດຖະກິດຂອງອີຣານ.

**ແຫຼ່ງຂ່າວອ້າງອີງ** :Vietnam News, Vietnam- Express, VNS, Xinhua, CNA, Global Times, Yonhap, CRI, Khmer Times, Aljazeera, RT, Kpl, Lao National Radio, Sputnik, Yonhap, BBC, CNN, AFP, NHK, Aljazeera, CGTN, Reuters, Nournews, TNN, Thai TBS, Top news, ສະຖານທູດລາວ ຢູ່ລັດເຊຍ, ກະຊວງການຕ່າງປະເທດລາວ, ກົມ ອປອ ຄຕພ, ກົມ ອອ ຄຕພ.

# II. ການເຄື່ອນໄຫວວຽກງານ ຂອງການນຳ ພັກ ປປ ລາວ

**ສະຫາຍ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ ປປ ລາວ, ປະທານປະເທດ ແຫ່ງ ສປປ ລາວ ພົບປະທາງໄກ ກັບ ສະຫາຍເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດ ແຫ່ງ ສ.ກູບາ**







ວັນທີ 30 ມິຖຸນາ 2022, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ ປປ ລາວ, ປະທານປະເທດ ແຫ່ງ ສປປ ລາວ ໄດ້ພົບປະຜ່ານລະບົບວີດີໂອທາງໄກ ກັບ ສະຫາຍ ມິເກັນ ດຽດ ການເນ, ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດແຫ່ງ ສ.ກູບາ. ສະຫາຍ ທອງລຸນ ສີສຸລິດ ໄດ້ສະແດງຄວາມປິຕິຍິນດີເປັນຢ່າງຍິ່ງ ທີ່ມີໂອກາດພົບປະຜ່ານວີດີໂອທາງໄກ ກັບ ສະຫາຍ ມິເກັນ ດຽດ ການເນ, ເປັນການພົບປະຄັ້ງທຳອິດຂອງ ສະຫາຍ ທອງລຸນ ສີສຸລິດ ໃນຖານະເປັນເລຂາທິການໃຫ່ຍ ຄະນະບໍລິຫານງານສູນກາງພັກ ປປ ລາວ ແລະ ສະຫາຍ ມິເກັນ ດຽດ ການເນ ທີ່ໄດ້ດຳລົງຕຳແໜ່ງເລຂາທິການທີໜຶ່ງ, ຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດ ສ.ກູບາ. ຝ່າຍລາວໄດ້ແຈ້ງສະພາບການທີ່ພົ້ນເດັ່ນຢູ່ ສປປ ລາວ ໃນໄລຍະຜ່ານມາ, ໂດຍສະເພາະ ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປປ ລາວ, ຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນສຳເລັດອັນໃຫຍ່ຫຼວງທີ່ປະຊາຊົນກູບາອ້າຍນ້ອງ ພາຍໃຕ້ການນຳພາອັນເດັດດ່ຽວໜຽວແໜ້ນຂອງພັກກອມມູນິດກູບາ ຍາດມາໄດ້ຕະຫຼອດໄລຍະ 60 ປີ ຜ່ານມາ ເປັນຕົ້ນແມ່ນຜົນສຳເລັດທີ່ມີຄວາມໝາຍຄວາມສຳຄັນໃນການພັດທະນາເສດຖະກິດ-ສັງຄົມ ແລະ ປົກປັກຮັກສາໝາກຜົນຂອງການປະຕິວັດ ໃນທ່າມກາງການປິດລ້ອມທາງດ້ານເສດຖະກິດ, ການຄ້າ ແລະ ການເງິນ ຂອງຈັກກະພັດ ແລະ ອິດທິກຳລັງປໍລະປັກ ເປັນເວລາ 6 ທົດສະວັດ. ຕີລາຄາສູງຕໍ່ຄວາມສາມັກຄີ, ສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ເປັນມູນເຊື້ອອັນດີງາມມາແຕ່ດົນນານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ກູບາ, ຊຶ່ງໄດ້ຮັບການເສີມຂະຫຍາຍໃຫ້ນັບມື້ນັບ  ແໜ້ນແຟ້ນຍິ່ງໆຂຶ້ນ, ປະກອບສ່ວນສຳຄັນເຂົ້າໃນພາລະກິດ ປະຕິວັດຢູ່ສອງປະເທດ ລາວ ແລະ ກູບາ ກໍຄືພາລະກິດ ສັນຕິພາບ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາໃນພາກພື້ນ ແລະ ໃນໂລກ. ສະຫາຍ ມິເກັນ ດຽດ ການເນ ໄດ້ແຈ້ງໃຫ້ຊາບສະພາບການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫ່ຍ ຄັ້ງທີ VIII ຂອງພັກກອມມູນິດກູບາ, ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ບັນດາຜົນສຳເລັດຂອງສປປ ລາວ ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ພາຍໃຕ້ການນຳພາອັນຖືກຕ້ອງ ແລະ ສະຫຼາດສ່ອງໃສ ຂອງພັກ ປປ ລາວ, ອັນໄດ້ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນລາວ ໄດ້ຮັບການປັບປຸງໃຫ້ດີຂຶ້ນເທື່ອລະກ້າວ; ບົດບາດ ແລະ ອິດທິພົນ ຂອງ ພັກ ແລະ ລັດຖະບານ ສປປ ລາວ ນັບມື້ສູງ ເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ. ພ້ອມທັງເຊື່ອໝັ້ນວ່າ ຄະນະບໍລິຫານງານສູນກາງພັກ ທີ່ມີ ສະຫາຍ ທອງລຸນ ສີສຸລິດ ເປັນຜູ້ນຳພານັ້ນ ຈະສາມາດສືບຕໍ່ປະສົບຜົນສຳເລັດໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ແລະ ຍາດໄດ້ຜົນສຳເລັດອັນໃຫຍ່ຫຼວງກວ່າເກົ່າ ຕາມມະຕິກອງປະຊຸມໃຫຍ່ຂອງພັກ ປປ ລາວ ຄັ້ງທີ XI ກຳນົດໄວ້.

# III. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ

1. **ຫົວໜ້າ ຄຕພ ໃຫ້ສຳພາດຕໍ່ສື່ມວນຊົນຫວຽດນາມ ໃນໂອກາດປີສາມັກຄີມິດຕະພາບລາວ-ຫວຽດນາມ ປີ 2022**



ວັນທີ 20 ມິຖຸນາ 2022, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ໃຫ້ສຳພາດຕໍ່ສື່ມວນຊົນຫວຽດນາມ ໃນໂອກາດປີສາມັກຄີມິດຕະພາບລາວ-ຫວຽດນາມ ປີ 2022, ໃນນັ້ນ ວັນສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມ ຄົບຮອບ 60 ປີ, ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ຄົບຮອບ 45 ປີ ໄດ້ກາຍເປັນນິມິດໝາຍສຳຄັນ ແຫ່ງການພົວພັນ ລາວ-ຫວຽດນາມ, ເຊິ່ງໄດ້ພ້ອມກັນສືບຕໍ່ພັດທະນາ ແລະ ເສີມຂະຫຍາຍສາຍພົວພັນຢ່າງບໍ່ຢຸດຢັ້ງ ກ້າວສູ່ການເຊັນສົນທິສັນຍາມິດຕະພາບ-ການຮ່ວມມື ໃນວັນທີ 18 ກໍລະກົດ 1977 ເຊິ່ງເປັນພື້ນຖານນິຕິກຳໃຫ້ແກ່ການເສີມຂະຫຍາຍສາຍພົວພັນ ລາວ-ຫວຽດນາມ ກ້າວສູ່ສາຍພົວພັນມິດຕະພາບ ທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ 2 ພັກ, 2 ລັດ ແລະ ປະຊາຊົນ 2 ຊາດ ລາວ-ຫວຽດນາມ. ການພົວພັນຮ່ວມມື 2 ຝ່າຍ ສືບຕໍ່ໄດ້ຮັບການເສີມຂະຫຍາຍ, ກ້າວສູ່ລວງເລິກ ແລະ ຂຶ້ນສູ່ລະດັບໃໝ່ທີ່ສູງກວ່າເກົ່າ ເປັນຕົ້ນ ທາງດ້ານການເມືອງ, ປກຊ-ປກສ, ດ້ານການຕ່າງປະເທດ, ເສດຖະກິດ-ການຄ້າ ແລະ ການລົງທຶນ, ວັດທະນະທຳ-ສັງຄົມ, ສຶກສາ-ບຳລຸງກໍ່ສ້າງພະນັກງານ, ສາທາລະນະສຸກ, ວິທະຍາສາດ-ເຕັກໂນໂລຊີ ແລະ ອື່ນໆ, ປະກອບສ່ວນສຳຄັນເຂົ້າໃນການສ້າງສາພັດທະນາ ເສດຖະກິດ-ສັງຄົມຂອງ 2 ປະເທດ; ສະຫາຍ ໄດ້ຕີລາຄາສູງການພົວພັນ 2 ຝ່າຍ ໃນຕະຫຼອດໄລຍະຜ່ານມາ ກໍ່ຄື ໄລຍະແຫ່ງຄວາມຫຍຸ້ງຍາກ ເນື່ອງຈາກການລະບາດ ຂອງ ໂຄວິດ-19, ການນຳຂັ້ນສູງສຸດຂອງ 2 ຝ່າຍ ໄດ້ພົບປະກັນປະຈຳໃນທຸກປີ, ສອງຝ່າຍ ຮັກສາໄດ້ການພົວພັນປົກກະຕິ ດ້ວຍຫຼາຍຮູບແບບ ແລະ ຫຼາຍຮູບການ. ພ້ອມທັງໃຫ້ການຊ່ວຍເຫຼືອກັນແລະກັນ ດ້ານວັກແຊງປົວພະຍາດ ແລະ ອຸປະກອນການແພດ.

ໃນໂອກາດດັ່ງກ່າວ, ສະຫາຍ ທອງສະຫວັນ ພົມວິຫານ ໄດ້ຕາງໜ້າ ພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ ສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນອັນລົ້ນເຫຼືອ ຜ່ານສື່ມວນຊົນ ຕໍ່ ພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ທີ່ໄດ້ໃຫ້ການຊ່ວຍເຫຼືອອັນລ້ຳຄ່າ, ທັນການ ແລະ ມີປະສິດທິຜົນ ແກ່ພາລະກິດຕໍ່ສູ້ປົດປ່ອຍຊາດໃນເມື່ອກ່ອນ ກໍ່ຄື ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຂອງລາວໃນປັດຈຸບັນ, ໂດຍສະເພາະ ແມ່ນການຊ່ວຍເຫຼືອຮັບມືຕ້ານການລະບາດຂອງພະຍາດໂຄວິດ-19, ການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ ແລະ ການເງິນຂອງລາວ ໃນປັດຈຸບັນ.

## 2. ສູນກາງພັກກອມມູນິດຈີນ ມອບລົດກວດສຸຂະພາບເຄື່ອນທີ່ ໃຫ້ສູນກາງພັກ ປປ ລາວ




ວັນທີ 29 ມິຖຸນາ 2022, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ມີພິທີ ມອບ-ຮັບ ລົດກວດສຸຂະພາບເຄື່ອນທີ່ ທີ່ ສູນກາງພັກກອມມູນິດຈີນ ມອບໃຫ້ ສູນກາງພັກ ປປ ລາວ ເພື່ອໝູນໃຊ້ເຂົ້າໃນວຽກງານສາທາລະນະສຸກ ຢູ່ ສປປ ລາວ, ໂດຍແມ່ນ ສະຫາຍ ຈຽງ ຈ້າຍຕົງ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສປ ຈີນ ປະຈຳ ສປປ ລາວ ໄດ້ຕາງໜ້າຝ່າຍຈີນ ກ່າວມອບ ແລະ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕາງໜ້າໃຫ້ ສູນກາງພັກ ປປ ລາວ ເປັນຜູ້ຮັບ ໂດຍມີບັນດາສະຫາຍ ຕາງໜ້າຄະນະນຳ ຈາກ ຫ້ອງວ່າການສູນກາງພັກ, ກົມຮັກສາສຸຂະພາບສູນກາງ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງ ຂອງຄະນະພົວພັນຕ່າງປະເທດສູນກາງພັກ ແລະ ສະຖານທູດ ແຫ່ງ ສປ ຈີນ ເຂົ້າຮ່ວມ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ຕາງໜ້າໃຫ້ ສູນກາງພັກ ປປ ລາວ ສະແດງຄວາມຂອບໃຈ ຕໍ່ ການຊ່ວຍເຫຼືອຂອງ ສູນກາງພັກກອມມູນິດຈີນ ໃນຄັ້ງນີ້ ກໍຄື ການຊ່ວຍເຫຼືອທາງດ້ານອຸປະກອນການແພດ, ຢາວັກແຊັງ ແລະ ການສົ່ງທີມແພດຊ່ຽວຊານ ມາຊ່ວຍ ສປປ ລາວ ຢ່າງທັນການ ເພື່ອຮັບມືກັບການແຜ່ລະບາດ ຂອງ ພະຍາດໂຄວິດ-19 ຢູ່ ສປປ ລາວ ໃນໄລຍະຜ່ານມາ, ເຊິ່ງເປັນການປະກອບສ່ວນສຳຄັນ ເຂົ້າໃນຜົນສຳເລັດໃນການຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດດັ່ງກ່າວ ຢູ່ ສປປ ລາວ, ທັງເປັນການສະແດງໃຫ້ເຫັນເຖິງມິດຈິດມິດໃຈ ຂອງ ການເປັນຄູ່ຮ່ວມຊະຕາກຳດຽວກັນ ຂອງ ປະຊາຊົນສອງຊາດ ລາວ-ຈີນ ຢ່າງແທ້ຈິງ.

ລົດກວດສຸຂະພາບເຄື່ອນທີ່ ທີ່ຝ່າຍຈີນ ມອບໃຫ້ຄັ້ງນີ້, ຄະນະພົວພັນຕ່າງປະເທດສູນກາງພັກ ຈະໄດ້ມອບຕໍ່ໃຫ້ ສູນກາງພັກ ປປ ລາວ ເພື່ອນຳໃຊ້ໃຫ້ເກີດຜົນປະໂຫຍດສູງສຸດ ໃນວຽກງານສາທາລະນະສຸກ.

## 3. ຮອງຫົວໜ້າ ຄຕພ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທີ່ປຶກສາສະຖານທູດອິດສະຕຣາລີ ປະຈໍາ ສປປ ລາວ



ວັນທີ 9 ມິຖຸນາ 2022, ທ່ານ ວາລະໄຊ ເລັ່ງສະຫວັດ, ຮອງຫົວໜ້າ ຄຕພ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ແດນ ເຮເດນ, ທີ່ປຶກສາວຽກງານໂຄງການສະໜັບສະໜູນເພື່ອການພັດທະນາ ຂອງສະຖານທູດອິດສະຕຣາລີ ປະຈໍາ ສປປ ລາວ, ໂດຍ ທ່ານ ແດນ ເຮເດນ ໄດ້ແຈ້ງຈຸດປະສົງໃນການຢ້ຽມຂໍ່ານັບຄັ້ງນີ້ ແມ່ນເພື່ອຊຸກຍູ້ ແລະ ເສີມຂະຫຍາຍສາຍພົວພັນ ລະຫວ່າງ ລາວ ແລະ ອິດສະຕຣາລີ ຕະຫຼອດ 70 ປີ ຜ່ານມາ ເວົ້າລວມ, ເວົ້າສະເພາະແມ່ນການຮ່ວມມືລະຫວ່າງສະຖານທູດອິດສະຕຣາລີ ກັບຄະນະພົວພັນຕ່າງປະເທດສູນກາງພັກ ໃນວຽກງານພັດທະນາຊັບພະຍາກອນມະນຸດ ໂດຍການເປີດກວ້າງການຢ້ຽມຢາມອິດສະຕຣາລີ ໃຫ້ແກ່ພະນັກງານ ຄຕພ ໃນຮູບແບບການໄປທັດສະນະໄລຍະສັ້ນ ລະຫວ່າງ 7-10 ວັນ, ພ້ອມທັງໄດ້ແຈ້ງໃຫ້ ຄຕພ ຊາບ ກ່ຽວກັບແຜນການເຊັນຂໍ້ຕົກລົງຮ່ວມມື ລະຫວ່າງ ລາວ-ອິດສະຕຣາລີ ທີ່ຄາດວ່າຈະມີການລົງນາມຮ່ວມກັນ ໃນເດືອນສິງຫາ ຫຼື ກັນຍາ 2022 ໃນໂອກາດທີ່ ທ່ານ ສະເຫຼີມໄຊ ກົມມະສິດ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດຂອງລາວ ຈະເດີນທາງໄປຮ່ວມເປີດສະຖານທູດລາວ ທີ່ ແຄນເບີລາ, ປະເທດອິດສະຕຣາລີ. ນອກຈາກນັ້ນ, ທ່ານ ແດນ ເຮເດນ ໄດ້ສະເໜີສ້າງຕັ້ງສະມາຄົມມິດຕະພາບ ລາວ-ອິດສະຕຣາລີ ແລະ ສະເໜີໃຫ້ຝ່າຍລາວ ຊຸກຍູ້ການລົງທຶນຂອງອິດສະຕຣາລີໃນລາວ ໂດຍສະເພາະໃນຂະແໜງການພະລັງງານ ທີ່ເປັນທ່າແຮງສໍາຄັນຂອງລາວ. ສ່ວນ ທ່ານ ວາລະໄຊ ເລັ່ງສະຫວັດ ໄດ້ສະແດງຄວາມຂອບໃຈ ຕໍ່ການສະໜັບສະໜູນທຶນການສຶກສາໃຫ້ແກ່ ສປປ ລາວ, ພ້ອມທັງສະແດງຄວາມຊົມເຊີຍຕໍ່ຜົນສໍາເລັດຂອງການເລືອກຕັ້ງທົ່ວໄປອິດສະຕຣາລີ ຄັ້ງທີ 47 ເຊິ່ງຝ່າຍລາວ ກໍໄດ້ສົ່ງສານສະແດງຄວາມຊົມເຊີຍ ຕໍ່ໄຊຊະນະຂອງພັກແຮງງານອິດສະຕຣາລີ ທີ່ໄດ້ຮັບໄຊຊະນະໃນການເລືອກຕັ້ງດັ່ງກ່າວ.

4. **ຄະນະພົວພັນຕ່າງປະເທດສູນກາງພັກ ຈັດພິທີປູກຕົ້ນໄມ້ ໃນໂອກາດວັນປູກຕົ້ນໄມ້ແຫ່ງຊາດ ປະຈຳປີ 2022**



ວັນທີ 01 ມິຖຸນາ 2022, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດພິທີປູກຕົ້ນໄມ້ ແລະ ສະເຫຼີມສະຫຼອງວັນເດັກນ້ອຍສາກົນ ປະຈຳປີ 2022, ທັງເປັນການສ້າງຂະບວນການຂໍ່ານັບຮັບຕ້ອນວັນສ້າງຕັ້ງ ຄຕພ ຄົບຮອບ 40 ປີ (29/6/1983 - 29/06/2023) ທີ່ສູນກິລາຄະນະພົວພັນຕ່າງປະເທດສູນກາງພັກ, ເຂດບ້ານໂນນສະອາດ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ໂດຍການເຂົ້າຮ່ວມຂອງ ສະຫາຍ ວາລະໄຊ ເລັ່ງສະຫວັດ, ກຳມະການຄະນະພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ; ມີບັນດາຜູ້ຕາງໜ້າ 3 ອົງການຈັດຕັ້ງມະຫາຊົນ ພ້ອມດ້ວຍພະນັກງານ ຄຕພ ຫຼາຍກວ່າ 60 ຄົນເຂົ້າຮ່ວມ. ຕົ້ນໄມ້ທີ່ນຳມາປູກໃນຄັ້ງນີ້ ມີຕົ້ນໄມ້ປະດັບ ແລະ ຕົ້ນໄມ້ກິນໝາກຈຳນວນໜຶ່ງ ເຊັ່ນ: ຕົ້ນຄູນ,ຕົ້ນຝາງແດງ, ຕົ້ນໝາກມ່ວງ, ລຳໄຍ ແລະ ຕົ້ນອາໂວກາໂດ ເພື່ອເຮັດໃຫ້ພື້ນທີ່ສູນກິລາ ຂອງຄະນະພົວພັນຕ່າງປະເທດສູນກາງພັກ ມີຄວາມສວຍງາມ ແລະ ຮົ່ມເຢັນ.

5. **ກອງປະຊຸມ ສະມາຄົມມິດຕະພາບ ປະຊາຊົນກັບປະຊາຊົນ ອາຊຽນ-ຈີນ ຄັ້ງທີ 13**






ວັນທີ 30 ມິຖຸນາ 2022, ກອງປະຊຸມສະມາຄົມມິດຕະພາບປະຊາຊົນກັບປະຊາຊົນ ອາຊຽນ-ຈີນ ຄັ້ງທີ່ 13 ຜ່ານລະບົບວີດີໂອທາງໄກ ໄດ້ຈັດຂຶ້ນ ພາຍໃຕ້ຫົວຂໍ້ **" ການຮ່ວມມືເພື່ອສ້າງຄວາມເຂັ້ມແຂງຮ່ວມກັນ ແລະ ດຳລົງຊີວິດຢ່າງປອດໄພຕາມວິຖີການດຳລົງຊີວິດແບບໃໝ່ "** ໂດຍການເປັນເຈົ້າພາບຂອງສະມາຄົມມິດຕະພາບ ລາວ-ຈີນ ຂັ້ນສູນ

ກາງ, ມີຜູ້ແທນຈາກສະມາຄົມມິດຕະພາບ ຈີນ-ອາຊຽນ, ສະມາຄົມມິດຕະພາບປະຊາຊົນຈີນກັບຕ່າງປະເທດ ແລະ ບັນດາສະມາຄົມມິດຕະພາບ ອາຊຽນ-ຈີນ ເຂົ້າຮ່ວມ. ຈຸດປະສົງຂອງກອງປະຊຸມຄັ້ງນີ້ແມ່ນເພື່ອປຶກສາຫາລືທິດທາງການຮ່ວມມືຂອງສະມາຄົມມິດຕະພາບ ລະຫວ່າງ ອາຊຽນ-ຈີນ ໃນສະພາບການແຜ່ລະບາດຂອງພະຍາດ COVID – 19 ເພື່ອໃຫ້ປະຊາຊົນໃນບັນດາປະເທດອາຊຽນ ແລະ ຈີນ ມີຄວາມປອດໄພຈາກພະຍາດດັ່ງກ່າວ, ຟື້ນຟູການໄປມາຫາສູ່ກັນໃຫ້ເປັນປົກກະຕິ; ຕີລາຄາການຈັດຕັ້ງປະຕິບັດ, ການເຄື່ອນໄຫວວຽກງານຂອງສະມາຄົມມິດຕະພາບໃນໄລຍະຜ່ານມາພ້ອມທັງປຶກສາຫາລືກ່ຽວກັບບັນດາແຜນການກໍ່ຄືກົນໄກການຮ່ວມມືໃນຕໍ່ໜ້າ ເພື່ອປະກອບສ່ວນເສີມສ້າງມິດຕະພາບ ແລະ ການຮ່ວມມືຕ້ານພະຍາດ COVID-19 ໃນບັນດາປະເທດອາຊຽນ ແລະ ຈີນ, ປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືຮອບດ້ານທີ່ຍືນຍົງ ແລະ ສ້າງເງື່ອນໄຂອໍານວຍຄວາມສະດວກໃຫ້ແກ່ການພັດທະນາຮ່ວມກັນຕ່າງຝ່າຍຕ່າງມີຜົນປະໂຫຍດ ລະຫວ່າງ ອາຊຽນ-ຈີນ, ຈີນ-ອາຊຽນ.

ກອງປະຊຸມ ໄດ້ເປັນເອກະພາບອອກຖະແຫຼງການຮ່ວມທິດທາງແຜນການຮ່ວມມືໃນຕໍ່ໜ້າ ລະຫວ່າງບັນດາສະມາຄົມມິດຕະພາບ ອາຊຽນ-ຈີນ ແລະ ຈີນ-ອາຊຽນ, ເຊິ່ງມີເນື້ອໃນສໍາຄັນເວົ້າເຖິງການພົວພັນຮ່ວມມືເພື່ອຮ່ວມກັນຕ້ານ ແລະ ສະກັດກັ້ນການແຜ່ລະຂອງພະຍາດ COVID – 19, ການຮ່ວມມືຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ, ໂຄງການ “ຂໍລິເລີ່ມໜຶ່ງແລວໜຶ່ງເສັ້ນທາງ” ແລະ ແຜນແມ່ບົດວ່າດ້ວຍການເຊື່ອມໂຍງອາຊຽນ ໃນປີ 2025, ສ້າງກົນໄກສືບຕໍ່ຕິດຕາມ, ຊຸກຍູ້ໃຫ້ມີການຮ່ວມມືລະຫວ່າງປະເທດ 3 ລະດັບ (1. ຂັ້ນນະຄອນຫຼວງ ຫຼື ແຂວງຕ່າງໆ, 2. ຂັ້ນເມືອງ ຂອງ ຈີນ-ອາຊຽນ ແລະ 3. ຂັ້ນໂຮງຮຽນ ຫຼື ໂຮງໝໍ) ເພື່ອສະໜັບສະໜູນການສ້າງມິດຕະພາບນໍາກັນໃຫ້ນັບມື້ຫຼາຍຂຶ້ນໃນບັນດານະຄອນຫຼວງ, ແຂວງ, ເມືອງ, ໂຮງຮຽນ, ໂຮງໝໍຂອງຈີນ ແລະ ບັນດາປະເທດອາຊຽນ. ໃນຕອນທ້າຍ, ທ່ານ ປອ. ເພັດ ພົມພິພັກ, ກໍາມະການສູນກາງພັກ, ລັດຖະມົນຕີ ກະຊວງກະສິກໍາ ແລະ ປ່າໄມ້, ປະທານສະມາຄົມມິດຕະພາບ ລາວ-ຈີນ ຂັ້ນສູນກາງ ກໍ່ໄດ້ມອບທຸງໃຫ້ສະມາຄົມມິດຕະພາບ ມາເລເຊຍ-ຈີນ ທີ່ຈະໄດ້ຮັບກຽດເປັນເຈົ້າພາບຈັດກອງປະຊຸມສະມາຄົມມິດຕະພາບ ລະຫວ່າງປະຊາຊົນກັບປະຊາຊົນ ອາຊຽນ-ຈີນ ຄັ້ງທີ 14 ໃນປີ 2024.